ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 53 /ຫກ
ນະຄອນຫຼວງວຽງຈັນ,ວັນທີ: 30 ພະຈິກ 2017

ສຳນັກງານ ຄຄຊ
ເລີ່ມ ...1319.......
ວັນທີ 01 DEC 2017
ໂທລະສັບ 021 217770

# ບົດລາຍງານ

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ ປະຈຳອາທິດທີ 13-17/11/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,25% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນປະຊາກອນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ເພີ່ມຂຶ້ນເປັນ 249.000 ຄົນ ຂອງອາທິດທີ 11/11/2017 ຈາກ 239.000 ຄົນ ໃນອາທິດຜ່ານມາ; ພ້ອມກັນນັ້ນ, ຕົວເລກດຸນງົບປະມານຂອງເດືອນ 10/2017 ຂາດດຸນ 63,2 ຕື້ໂດລາສະຫະລັດ ຈາກຂາດດຸນ 45,8 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 06-10/11/2017 | ອາທິດນີ້ 13-17/11/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1647 | 1,1794 | -1,25% |
| ເຢນ/ໂດລາ | 113,43 | 112,53 | 0,80% |
| ບາດ/ໂດລາ | 33,120 | 32,830 | 0,88% |
| ເປໂຊ/ໂດລາ | 51,24 | 50,88 | 0,71% |
| ຣູເປັຍ/ໂດລາ | 13.530 | 13.525 | 0,04% |
| ໂດລາສິງກະໂປ/ໂດລາ | 1,3601 | 1,3568 | 0,24% |
| ຢວນ/ໂດລາ | 6,6366 | 6,6329 | 0,06% |

#### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 2,97% ຈາກ 57,66 ໂດລາ/ບາເຣວ ມາເປັນ 55,95 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ເພີ່ມຂຶ້ນ 1,85 ລ້ານບາເຣວ ຂອງອາທິດທີ 10/11/2017 ຈາກເພີ່ມຂຶ້ນ 2,24 ລ້ານບາເຣວ ໃນອາທິດຜ່ານມາ;

- ສໍາລັບລາຄາຄໍາ ຫຼຸດລົງ 0,10% ຈາກ 1.284,20 ໂດລາ/ອອນ ມາເປັນ 1.282,96 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອເກງກໍາໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,27% ແຕ່ອ່ອນຄ່າລົງ 0,23% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,002% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 7,97% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 06-10/11/2017 | | | ອາທິດນີ້ 13-17/11/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.348,69 | 8.369,79 | 8.358,03 | 8.324.95 | 8.351,24 | 8.335,52 | 0,29% | 0,22% | 0,27% | -0,10% | 0,04% | 0,002% |
| ບາດ | 253,16 | 254,75 | 254,30 | 253,85 | 255,43 | 254,90 | -0,27% | -0,26% | -0,23% | -7,98% | -7,96% | -7,97% |

### 2.2 ສະພາບຖານເງິນຕາແລະປະລິມານເງິນM2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 0,89% ເມື່ອທຽບໃສ່ອາທິດຜ່ານມາ ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,85%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,96% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,50%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (10-16/11/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 7,93 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 31,27 ລ້ານໂດລາແລະຂາຍໂດລາໄດ້ 23,34 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 415,97 ລ້ານບາດ (ໃນນີ້ຊື້ບາດໄດ້ 149,00 ລ້ານບາດ ແລະຂາຍບາດໄດ້ 564,97 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ຫຼຸດລົງ 14,67% ແຕ່ເງິນບາດ ເພີ່ມຂຶ້ນ 22,06%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈໍານວນ 3,63 ລ້ານໂດລາ ແລະ ເງິນບາດໃຫ້ທະນາຄານທຸລະກິດ ຈໍານວນ 167,80 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 5,30 ລ້ານໂດລາສະຫະລັດ ແລະ ເງິນບາດ ຈໍານວນ 38,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າບໍ່ມີການຊື້-ຂາຍ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລັ່ຍຖ່ວງນໍ້າໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 03-09/11/2017 | | ອາທິດນີ້ 10-16/11/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **30,40** | **129,11** | **31,27** | **149,00** | **2,86%** | **15,41%** |
| - ທ/ຄທຸລະກິດລັດ | 16,19 | 53,36 | 12,86 | 49,56 | -20,57% | -7,12% |
| - ທ/ຄທຸລະກິດອື່ນໆ | 14,21 | 75,75 | 18,41 | 99,44 | 29,56% | 31,27% |
| **2. ການຂາຍເງິນຕາຕ່າງປະເທດ** | **33,60** | **455,81** | **23,34** | **564,97** | **-30,54%** | **23,95%** |
| - ທ/ຄທຸລະກິດລັດ | 25,21 | 112,29 | 9,62 | 212,47 | -61,84% | 89,22% |
| - ທ/ຄທຸລະກິດອື່ນໆ | 8,39 | 343,52 | 13,72 | 352,50 | 63,53% | 2,61% |
| **ຊື້-ຂາຍສຸດທິທທກ** | **-3,20** | **-326,70** | **7,93** | **-415,97** | **-347,81%** | **27,32%** |
| - ຜິດດ່ຽງຊື້-ຂາຍ | -10,53% | -253,04% | 25,36% | -279,17% | -340,84% | 10,33% |
| **- ມູນຄ່າການຊື້-ຂາຍ** | **64,00** | **584,92** | **54,61** | **713,97** | **-14,67%** | **22,06%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **-17,44** | **-5,00** | **-3,63** | **-167,80** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 17,44 | 5,00 | 3,63 | 167,80 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **0,53** | **35,40** | **5,30** | **38,00** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 11/2017 ຄາດວ່າຈະຢູ່ໃນລະດັບ 0,27% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 26,7% ທຽບໃສ່ອາທິດຜ່ານມາໂດຍມີຈຳນວນ 23,34 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 130,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 64,67 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 892 ສະບັບທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 158 ສະບັບ ເທົ່າກັບ 21,53% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 402,49 ຕື້ກີບທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 41,42 ຕື້ກີບ ເທົ່າກັບ 11,47% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ(10-16/11/2017) ມີທັງໝົດ 3.262 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.162 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 122,36 ຕື້ກີບ ຈາກ 667,04 ຕື້ກີບ ມາເປັນ 789,4 ຕື້ກີບເທົ່າກັບ 18,34%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 100 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນ 30,99 ຕື້ກີບ ຈາກ 5,42 ຕື້ກີບ ມາເປັນ 36,41 ຕື້ກີບ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 1.024,15 ຈຸດ ຫຼຸດລົງ 0,92% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 223.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,05 ຕື້ກວ່າກີບ ເພີ່ມຂຶ້ນ 411,79% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 58,09% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 06-10/11/2017 | ດັດຊະນີອາທິດທີ 13-17/11/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.033,63 | 1.024,15 | -0,92 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX) (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 14.000 | 69.755.000 | 4.983 | 22.000 | 97.580.000 | 4.435 | 57,14 | 39,89 | -547 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 25.300 | 126.450.000 | 4.998 | 199.400 | 951.295.000 | 4.771 | 688,14 | 652,31 | -227 |
| ບໍລິສັດລາວເວີນມະຫາຊົນ | - | - | 7.000 | 500 | 3.150.000 | 7.000 | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | 300 | 670.000 | 2.233 | 100 | 230.000 | 2.300 | -66,67 | -65,67 | 67 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 5.100 | 9.320.000 | 1.827 | 1.700 | 3.035.000 | 1.785 | -66,67 | -67,44 | -42 |
| ທັງໝົດ | 44.700 | 206.195.000 | 4.613 | 223.700 | 1.055.290.000 | 4.717 | 400,45 | 411,79 | |

3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: (1) ເຂົ້າຮ່ວມພິທີປິດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ຫ້ອງປະຊຸມເກົ້າຫຼັກ 6); (2) ກອງປະຊຸມທີມງານເສດຖະກິດຂອງລັດຖະບານ ທີ່ (ຫສນຍ); (3) ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງໂຄງສ້າງ ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ທີ່ (ທຫລ); (4) ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ (ກະຊວງການເງິນ); (5) ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍລະບົບການຊຳລະ ທີ່ (ທຫລ); (6) ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ) ແລະ (7) ກອງປະຊຸມປຶກສາຫາລືຮ່າງນະໂຍບາຍ ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ທີ່ (ສຄຄຊ).

- ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທາງດ້ານການເງິນ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ ລະຫວ່າງ ທຫລ ກັບ ທະນາຄານພັດທະນາລາວແຫ່ງຊາດຈີນ;
- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ຮ່ວມປຶກສາຫາລືວຽກ ກັບ ບໍລິສັດ China Union Pay.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍແລະອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ.
- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ:** (1) ກະກຽມກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ; (2) ກອງປະຊຸມປຶກສາຫາລືເພື່ອລະດົມຄຳເຫັນໃສ່ຮ່າງນິຕິກຳ 2 ສະບັບຄື: ຕົວແທນຜູ້ອອກຮຸ້ນກູ້ ແລະ ການກຳນົດລາຄາຮຸ້ນຂອງບໍລິສັດ ທີ່ສົນໃຈອອກຮຸ້ນ ຂອງ ສຄຄຊ ທີ່ (ທຫລ); (3) ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍລະບົບການຊຳລະຕາມການປະກອບຄຳເຫັນຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ທຫລ); (4) ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ພະຈິກ 2017 ທີ່ (ທຫລ); (5) ກອງປະຊຸມກ່ຽວກັບ ວຽກຕະຫຼາດຫຼັກຊັບລາວ; (6) ກອງປະຊຸມໂຕະມົນລະດັບຊາດ ທີ່ (ແຂວງຈຳປາສັກ); (7) ກອງປະຊຸມຄະນະວິຊາການປັບປຸງຄວາມເຂັ້ມແຂງຂອງຕະຫຼາດທຶນ ສປປ ລາວ ທີ່ (ທຫລ) ແລະ (8) ພິທີປະຖະກະຖາວັນຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ.
- ກະກຽມຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສຄຄຊ, ຕລຊລ ແລະ ສອກຊ;
- ກະກຽມເຮັດວຽກກັບຄະນະ IMF ທີ່ຈະມາປະເມີນສະພາບເສດຖະກິດຂອງ ສປປ ລາວ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ